ພິທີເປີດໂຕ ຜະລິດຕະພັນ ທຄຕລ ເງິນດ່ວນຊຸມຊົນ BCOME ໄລຍະທີ 02

ທີ່ ນະຄອນຫຼວງວຽງຈັນ, ວັນທີ 25/09/2018

ໃນວັນທີ 25/09/2018 ທີ່ສູນປະຊຸມ ICTC ຫຼັກ 5 ນະຄອນຫຼວງວຽງຈັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ມີການເປີດໂຕຜະລິດຕະພັນ "ທຄຕລ ບໍລິການເງິນດ່ວນຊຸມຊົນ ໄລຍະ 02" ຫຼື BCOME Version 02 ຂຶ້ນ, ໃຫ້ກຽດເຂົ້າຮ່ວມງານໂດຍ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ, ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫ່ຍທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທ່ານ Jean-Bernard Carrasco ເອກອັກຄະລັດຖະທູດ ອິດສະຕຣາລີ ປະຈຳ ສປປ ລາວ ທັງເປັນຕົວແທນສະໜັບສະໜູນໂຄງການ BCOME ພ້ອມດ້ວຍຜູ້ຕາງໜ້າຈາກກະຊວງ, ອົງການຈັດຕັ້ງທີ່ກ່ຽວຂ້ອງ, ຄະນະອຳນວຍການ ທຄຕລ, ຕົວແທນ BCOME ພ້ອມດ້ວຍພະນັກງານ ຂອງ ທຄຕລ ແລະ ນັກຂ່າວສື່ມວນຊົນຈາກຫຼາຍພາກສ່ວນເຂົ້າຮ່ວມຢ່າງພ້ອມພຽງ.



ຜະລິດຕະພັນ "ທຄຕລ ບໍລິການເງິນດ່ວນຊຸມຊົນ" ຫຼື ເອີ້ນຫຍໍ້ວ່າ ບີຄຳ BCEL Community Money Express or BCOME ແມ່ນຜະລິດຕະພັນການເງິນດີຈີຕ້ອນໃໝ່ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ ຫຼື BCEL) ເຊິ່ງໃຫ້ບໍລິການໂດຍຜ່ານຕົວແທນ (Agent Banking) ເປັນການໃຫ້ບໍລິການດ້ານການເງິນທີ່ຫຼາກຫຼາຍ ທີ່ສະດວກ, ທັນສະໄໝ ໃນເຂດຊຸມຊົນໃກ້ບ້ານທ່ານໄດ້ຕະຫຼອດໂມງໃຫ້ບໍລິການຂອງຕົວແທນ. ເປັນໝາກຜົນຈາກໂຄງການຮ່ວມມືລະຫວ່າງ **BCEL** ແລະ ໂຄງການສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກ **(MAFIPP)** ທີ່ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານອິດສະຕຣາລີ ພາຍໃຕ້ທິດຊີ້ນຳຂອງ ທຫລ ສະບັບເລກທີ: **1466/**ກຄສງ ນະຄອນຫຼວງວຽງຈັນ**,** ລົງວັນທີ: **29/10/2013,** ທຄຕລ ໄດ້ມີການແຕ່ງຕັ້ງ ຄະນະຮັບຜິດຊອບຜະລິດຕະພັນຂຶ້ນເພື່ອຮ່ວມເຮັດວຽກກັບທີ່ປຶກສາຂອງໂຄງການ **MAFIPP** ຮ່ວມກັນພັດທະນາຜະລິດຕະພັນດັ່ງກ່າວ**,** ໃຫ້ບັນລຸແຜນຍຸດທະສາດການຂະຫຍາຍຕາໜ່າງການບໍລິການດ້ານການເງິນໃຫ້ເຂົ້າເຖິງປະຊາຊົນເຂດຊຸມຊົນຫ່າງໄກໃຫ້ຫຼາຍຂຶ້ນ.

BCOME ເກີດຂຶ້ນຈາກພື້ນຖານ ຄວາມຮຽກຮ້ອງຕ້ອງການຂອງ ສັງຄົມ ຫຼື ພໍ່ແມ່ປະຊາຊົນ ຜູ້ທີ່ມີຄວາມຫຍຸ້ງຍາກ ແລະ ມີຂໍ້ຈຳກັດ ໃນການເຂົ້າເຖິງການບໍລິການທຸລະກຳທາງດ້ານການເງິນ, ທຄຕລ ເຫັນໄດ້ເຖິງຄວາມສຳຄັນບັນຫາ ດັ່ງກ່າວ ຈຶ່ງໄດ້ມີການສຶກສາ ຄົ້ນຄ້ວາ ແລະ ພັດທະນາລະບົບ ຜະລິດຕະພັນການເງິນດີຈີຕ້ອນໃໝ່ ອອກໃຫ້ບໍລິການສູ່ສັງຄົມ ແຕ່ເດືອນ 06/2015 ເປັນຕົ້ນມາ. ຈາກ ເບື້ອງຕົ້ນໃນເດືອນ ມິຖຸນາ 2015 ມີ ຕົວແທນພຽງ 12 ຮ້ານ, ມີລູກຄ້າໃຊ້ບໍລິການພຽງ 55 ຄົນ, 83 ທຸລະກຳ

ລວມມູນຄ່າ 139 ລ້ານກີບ, ມາຮອດໄຕມາດທີ **2 ປີ 2018** ມີລູກຄ້າເພີ່ມຂຶ້ນເກືອບ 14.000 ຄົນ, ທຸລະກຳຫຼາຍກວ່າ 48.000 ລາຍການ, ສະເລ່ຍວົງເງິນທີ່ເຄື່ອນໄຫວຕໍ່ເດືອນປະມານ 20 ກວ່າຕື້ກີບ. ສັງເກດໄດ້ວ່າຜະລິດຕະພັນດັ່ງກ່າວໄດ້ມີການຕອບຮັບຈາກສັງຄົມເປັນຢ່າງດີຈຶ່ງໄດ້ມີການພັດທະນາໄປເລື້ອຍໆ.





ໃນໄລຍະຜ່ານມາ BCOME ສາມາດໃຫ້ບໍລິການໄດ້ 02 ຜະລິດຕະພັນຄື: ການໂອນລອຍ ແລະ ການມອບເງິນເຂົ້າບັນຊີ ແລະ ໃນມື້ນີ້ ທຄຕລ ໄດ້ເປີດໃຫ້ບໍລິການຜະລິດຕະພັນ "ທຄຕລ ບໍລິການເງິນດ່ວນຊຸມຊົນ ໄລຍະທີ 02" ຫຼື BCOME Version 02 ຂຶ້ນ ເຊິ່ງປະຊາຊົນສາມາດໃຊ້ບໍລິການທີ່ຫຼາກຫຼາຍ ໄດ້ທີ່ຮ້ານຕົວແທນ ດັ່ງລຸ່ມນີ້:

- ເປີດບັດ ATM BCOME
- ຝາກເງິນເຂົ້າບັນຊີ ທຄຕລ ແລະ ບັດ ATM BCOME
- ຖອນເງິນດ້ວຍຜະລິດຕະພັນບັດພາຍໃນ ທຄຕລ
- ໂອນລອຍ, ໂອນເຂົ້າບັນຊີ ທຄຕລ
- ໂອນຂ້າມທະນາຄານ (ພາຍໃນປະເທດ)
- ຈ່າຍຄ່ານ້ຳ, ຄ່າໄຟຟ້າ ແລະ ຄ່າໂທລະສັບ
- ຈ່າຍຄ່າທຳນຽມທາງປະຈຳປີ
- ແລະ ບໍລິການອື່ນໆ

1. ບໍລິການບັດ ATM BCOME ທຄຕລ ບໍລິການເງິນດ່ວນຊຸມຊົນ

ເປັນບັດປະເພດສຳລັບບຸກຄົນທົ່ວໄປ, ເປີດໄດ້ສະເພາະເງິນກີບ, ໄດ້ຮັບອັດຕາດອກເບ້ຍເງິນຝາກປະຢັດ, ນຳໃຊ້ເລກໜ້າບັດຢັ້ງຢືນການເຄື່ອນໄຫວທຸລະກຳ ສາມາດໃຊ້ບໍລິການໄດ້ທີ່ຕົວແທນ BCOME, ຕູ້ ATM ແລະ ຈຸດບໍລິການຂອງ ທຄຕລ ທົ່ວ ລະບົບ. ບັດ ATM BCOME ສາມາດໃຊ້ໄດ້ຫຼາກຫຼາຍເຊັ່ນ: ຖອນເງິນ, ໂອນເງິນຫາບັນຊີລູກຄ້າ ທຄຕລ, ໂອນຈາກບັດເປັນ ເງິນສົດ, ໂອນເງິນຂ້າມທະນາຄານ, ກວດຍອດເງິນເບິ່ງລາຍການເຄື່ອນໄຫວ 5 ຄັ້ງຫຼ້າສຸດຂອງບັດ, ຊຳລະຄ່ານ້ຳປະປາ, ຄ່າໄຟຟ້າ, ຄ່າໂທລະສັບ ແລະ ຊຳລະຄ່າທຳນຽມທາງ.

2. ບໍລິການຖອນເງິນສົດທີ່ຮ້ານຕົວແທນ BCOME

ການຖອນເງິນສົດທີ່ຮ້ານຕົວແທນ BCOME ທຄຕລ ລູກຄ້າສາມາດໃຊ້ບໍລິການໄດ້ດ້ວຍບັດ BCOME ແລະ ຜະລິດຕະ ພັນບັດພາຍໃນຂອງ ທຄຕລ, OnePay, ລູກຄ້າຈະໄດ້ເສຍຄ່າທຳນຽມການຖອນເງິນເມື່ອທຸລະກຳສຳເລັດ ຕາມອັດຕາຄ່າທຳນຽມ ບໍລິການທີ່ ທຄຕລ ປະກາດນຳໃຊ້ແຕ່ລະໄລຍະ.

3. ບໍລິການໂອນລອຍຜ່ານຕົວແທນ BCOME

ການໂອນລອຍຜ່ານຕົວແທນ ເປັນການໂອນດ້ວຍເງິນສົດ ເຊິ່ງຜູ້ໂອນເງິນ ແລະ ຜູ້ຮັບເງິນ ບໍ່ມີບັນຊີຂອງທະນາຄານໃດກໍໄດ້ ການນຳໃຊ້ບໍລິການແມ່ນນຳໃຊ້ເອກະສານຢັ້ງຢືນຕົວຕົນເຊັ່ນ: ບັດປະຈຳຕົວ, ປຶ້ມສຳມະໂນຄົວ, ບັດທະຫານ, ບັດຕຳຫຼວດ, ບັດ ພະນັກງານບຳນານ, ໜັງສືເດີນທາງ, ໜັງສືສຸດທິສີງ. ຜູ້ໂອນເງິນຈະໄດ້ຮັບຂໍ້ຄວາມລະຫັດຮັບເງິນ 7 ຕົວເລກ ເພື່ອແຈ້ງບອກຜູ້ຮັບ ເງິນປາຍທາງຮັບຊາບແຕ່ພຽງຜູ້ດຽວ.

4. ບໍລິການໂອນເງິນຈາກບັນຊີ ຫຼື ຜະລິດຕະພັນບັດ ຫຼື ຜະລິດຕະພັນອີເລັກໂທນິກ ຂອງ ທຄຕລ ຮັບເງິນສົດປາຍທາງ

ແມ່ນການໂອນເງິນຈາກບັນຊີ (ເຄົ້າເຕ້ີ ທຄຕລ) ຫຼື ບັດ BCOME ຫຼື ບັດພາຍໃນ ທຄຕລ (ຮ້ານຕົວແທນ BCOME) ຫຼື BCEL One & i-Bank ຮັບເງິນສົດປາຍທາງທີ່ເຄົ້າເຕ້ີ ທຄຕລ ຫຼື ຮ້ານຕົວແທນເຊ່ິງຜູ້ຮັບເງິນປາຍທາງ ຕ້ອງຂຽນຟອມໃຫ້ຄົບຖ້ວນ ແຈ້ງລະຫັດຮັບເງິນ 7 ຕົວເລກ. ຈຳນວນເງິນໂອນ ແລະ ນຳໃຊ້ເອກະສານຢັ້ງຢືນຕົວຕົນໃນການຮັບເງິນໂອນດັ່ງກ່າວ.

5. ບໍລິການໂອນເງິນດ້ວຍຜະລິດຕະພັນບັດ ແລະ ບັນຊີ ທຄຕລ ຜ່ານຕົວແທນ BCOME

ລູກຄ້າຕ້ອງມີບັດ BCOME ຫຼື ຜະລິດຕະພັນບັດກັບ ທຄຕລ ຈ່ຶງສາມາດໃຊ້ບໍລິການກັບຮ້ານຕົວແທນດ້ວຍການນຳໃຊ້ບັດ BCOME ແລະ ຜະລິດຕະພັນບັດ ທຄຕລ ຮູດຜ່ານເຄ່ືອງຮູດ, ພິມຈຳນວນເງິນ ແລະ ຢັ້ງຢືນການໂອນເງິນດ້ວຍລະຫັດຂອງ ຜະລິດຕະພັນບັດພາຍໃນຂອງ ທຄຕລ (PIN CODE) ຂອງລູກຄ້າເອງ.

6. ການໂອນເງິນຂ້າມທະນາຄານຜ່ານຕົວແທນ BCOME

ລູກຄ້າສາມາດມອບເງິນສົດ ຫຼື ໂອນເງິນ ດ້ວຍຜະລິດຕະພັນບັດຂອງ ທຄຕລ ເຂ້ົາບັນຊີທະນາຄານທຸລະກິດອ່ືນພາຍໃນປະເທດ ໄດ້ທ່ີຮ້ານຕົວແທນ ໂດຍບັນຊີທະນາຄານປາຍທາງ ຕ້ອງເປັນບັນຊີສະກຸນເງິນກີບ ປະເພດຝາກປະຫຍັດ ຫຼື ກະແສລາຍວັນເທ່ົານ້ັນ.

7. ການຮັບຊຳລະຄ່າໄຟຟ້າ, ນ້ຳປະປາ ແລະ ຄ່າໂທລະສັບ

ລູກຄ້າສາມາດຊຳລະຄ່າໄຟຟ້າ, ນ້ຳປະປາ ແລະ ຄ່າໂທລະສັບ ດ້ວຍການມອບເງິນສົດ ຫຼື ໂອນເງິນດ້ວຍຜະລິດຕະພັນບັດ ທຄຕລ, ໂດຍລູກຄ້າຕ້ອງໄດ້ນຳເອົາໃບບິນຄ່າໄຟຟ້າ, ນ້ຳປະປາ ແລະ ຄ່າໂທລະສັບ ແຈ້ງກັບຕົວແທນ ແລະ ເຊ້ັນຢັ້ງຢືນຮັບໃບບິນການຊຳລະພາຍຫຼັງທຸລະກຳສຳເລັດ.

8. ບໍລິການຮັບຊຳລະຄ່າທຳນຽມທາງປະຈຳປີ

ລູກຄ້າສາມາດຊຳລະຄ່າທຳນຽມທາງປະຈຳປີ ແລະ ຮັບສະຕິກເກ້ີຄ່າທາງ ໄດ້ທ່ີຕົວແທນດ້ວຍການມອບເງິນສົດ ຫຼື ໂອນເງິນດ້ວຍຜະລິດຕະພັນບັດ ທຄຕລ, ໂດຍລູກຄ້າຕ້ອງໄດ້ນຳເອົາທະບຽນລົດ ແລະ ປ້ຶມທະບຽນລົດ (ປ້ຶມເຫຼ ືອງ) ແຈ້ງກັບຕົວແທນ ແລະ ເຊ້ັນຢັ້ງຢືນການຮັບໃບບິນຊຳລະພາຍຫຼັງທຸລະກຳສຳເລັດ.

ທ້ັງໝົດນ້ີແມ່ນການບໍລິການທ່ີຫຼາກຫຼາຍຂອງຜະລິດຕະພັນ BCOME Version 02 ທ່ີ ທຄຕລ ໄດ້ພັດທະນາຕ່ຳຈາກ Version ເກ່ົາ ທຄຕລ ຈະສືບຕ່ໍພັດທະນາ ແລະ ປັບປຸງຄຸນນະພາບດ້ານຜະລິດຕະພັນ ແລະ ການບໍລິການດ້ານການເງິນດີຈີຕ້ອນແບບໃໝ່ນ້ີ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງລູກຄ້າ, ປະຊາຊົນທ່ົວໄປ ໃນແຕ່ລະໄລຍະເພ ື ່ອອຳນວຍຄວາມສະດວກ ໃນການເຂ້ົາເຖ ິ ງບໍລິການດ້ານການເງິນໃຫ້ທ່ົວເຖ ິ ງ ແລະ ເພ ິ ່ມຂ ຶ ້ນເລ ື ້ອຍໆ ໂດຍສະເພາະແມ່ນເຂດຫ່າງໄກສອກຫຼີກ ຫຼື ເຂດຕົວເມ ືອງທ ີ ່ຍ ັ ງບ ໍ ່ ທ ັ ນເຂ ້ ົ າເຖ ິ ງທະນາຄານ ຫຼ ື ສ ະ ຖ າ ບ ັ ນ ການ ເ ງ ິ ນ ຈ ຸ ລ ະ ພ າ ກ ຕ ່ າ ງ ໆ.











ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ອ່ອງໄວ ໝັ້ນໃຈ